ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: 0215 /ອຄ.ກຄພມ
ນະຄອນຫຼວງວຽງຈັນ, ວັນທີ: 05 ມີນາ 2019

**ຮຽນ:** ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ແລະ ຂັ້ນແຂວງ.

**ເລື່ອງ:** ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເພື່ອຮອງຮັບປີທ່ອງທ່ຽວ ລາວ-ຈີນ ປີ 2019.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017, ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການເຂົ້າສູ່ລະບຽບກົດໝາຍ ບົນພື້ນຖານກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງ ແລະ ດັດສົມຂອງລັດ ພ້ອມທັງບໍ່ໃຫ້ເອົາລັດເອົາປຽບຜູ້ຊົມໃຊ້, ຊຶ່ງຈະສ້າງຜົນກະທົບພາບລວມເສດຖະກິດຂອງຊາດ, ໂດຍສະເພາະແມ່ນໄລຍະເປີດປີທ່ອງທ່ຽວ ລາວ-ຈີນ ປີ 2019 ນີ້:

ລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ, ໃນນາມປະທານຄະນະຊີ້ນຳວຽກງານຄຸ້ມຄອງລາສິນຄ້າ ແລະ ຄ່າບໍລິການ ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊີ້ນຳສາຍຕັ້ງຂອງຕົນນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ເພື່ອປະຕິບັດຕາມພາລະບົດບາດໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໃນປີທ່ອງທ່ຽວ ລາວ-ຈີນ ປີ 2019 ດັ່ງນີ້:

1. ສະເໜີໃຫ້ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ຕາມຂໍ້ຕົກລົງ ສະບັບເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017, ຊີ້ນຳສາຍຕັ້ງຂອງຕົນ ໂດຍສະເພາະຂັ້ນທ້ອງຖິ່ນ ເພື່ອເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ, ພ້ອມດຽວກັນນີ້ ໃຫ້ເປັນເຈົ້າການໃນການຄຸ້ມຄອງລາຄາສິນຄ້າ, ລາຄາອາຫານ ແລະ ຄ່າບໍລິການຕ່າງໆ ເຊັ່ນ:
   - ການກຳນົດ ແລະ ການຄຸ້ມຄອງລາຄາຫ້ອງພັກ ແລະ ໂຮງແຮມ ໃຫ້ສົມເຫດສົມຜົນ;
   - ການກຳນົດ ແລະ ການຄຸ້ມຄອງລາຄາ ປະເພດອາຫານ ຢູ່ຕາມຮ້ານອາຫານ ແລະ ສະຖານທີ່ແຫຼ່ງທ່ອງທ່ຽວຕ່າງໆ;
   - ການກຳນົດ ແລະ ການຄຸ້ມຄອງຄ່າເຂົ້າຊົມສະຖານທີ່ແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ ແລະ ທຳມະຊາດ ແລະ ການຄຸ້ມຄອງຄ່າບໍລິການອື່ນໆ ທີ່ຕິດພັນກັບການທ່ອງທ່ຽວ.

2. ມອບໃຫ້ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມກອງເລຂາຂອງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເປັນຜູ້ຕິດຕາມການຈັດຕັ້ງປະຕິບັດ ພ້ອມທັງສະຫຼຸບ-ລາຍງານຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃຫ້ຂັ້ນເທິງຊາບໃນແຕ່ລະໄລຍະ ເພື່ອພ້ອມກັນແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ.

ລັດຖະມົນຕີ
ປະທານຄະນະຊີ້ນຳ
ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ

ກະຊວງອຸດສາຫະກຳ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ

**ບ່ອນສົ່ງ:**

- ຫສນຍ (ເພື່ອລາຍງານ);
- ບັນດາກະຊວງ (ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ) ເພື່ອປະຕິບັດ;
- ບັນດາທ່ານເຈົ້າແຂວງ/ເຈົ້າຄອງ (ເພື່ອປະຕິບັດ);
- ພະແນກ ອຄ ແຂວງ/ນວ ຂອບເຂດທົ່ວປະເທດ (ເພື່ອປະຕິບັດ );